ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໗/ປພຖຊ/໐໙໔໓໐໙**

# ບົດຄວາມ

## ປະເທດລາວ ຍັງຢູ່ບັນຊີດຳ ຢາເສບຕິດ.

ປະເທດລາວ ຍັງຢູ່ໃນບັນຊີດຳປະຈຳປີ ຂອງສະຫະຣັດ ກ່ຽວກັບການຜລິດ ແລະຈຳໜ່າຍ ຢາເສບຕິດທີ່ຜິດກົດໝາຍ (U.S.A. TODAY.com – 9/16/09).

ຍາມໃດ...ພັກຣັດ ກໍປະຕິເສດ ເມື່ອເວົ້າເຖິງການຜລິດ, ການຈຳໜ່າຍ ແລະສົ່ງຊ່ຽນ ຢາເສບຕິດຢູ່ໃນລາວ.

ພັກຣັດ ປະກາດວ່າ "ລາວເປັນປະເທດເອກຣາດແລະປົກຄອງດ້ວຍກົດໝາຍ ແລະຍາມໃດ ກໍປະຕິບັດພັນທະ ຮ່ວມມືກັບສາກົນ ກ່ຽວກັບການປາບປາມຢາເສບຕິດ. ແຕ່ໃນຄວາມເປັນຈິງແລ້ວ, ພັກຣັດ, ເວົ້າແນວນຶ່ງ-ຊ້ຳພັດເຮັດໄປອີກແນວນຶ່ງ, ບໍ່ໃຫ້ການຮ່ວມມື ກັບອົງການປາບປາມຢາເສບຕິດ ແລະອາສຍາກັມ

ສາກົນເທົ້າທີ່ຄວນ. ປະເທດລາວ, ຈຶ່ງຍັງຢູ່ໃນບັນຊີດຳປະຈຳປີ ຂອງສະຫະຣັດ ກ່ຽວກັບການຜລິດ ແລະຈຳໜ່າຍຢາເສບຕິດ ທີ່ຜິດກົດໝາຍ.

ການຈັບຢາບ້າ ຢ່າງຫລວງຫລາຍ ຢູ່ປະເທດໄທຍ ທີ່ມາຈາກລາວ, ການຈັບຢາຝິ່ນທີ່ຝາກທາງ ໄປຣສະນີ ເຂົ້າອະເມຣິກາ; ການນຳເອົາຫົວເຊື້ອເຄມີ ຈາກພໍ່ຄ້າ ເພື່ອຜລິດຢາເສບຕິດ ຢູ່ ແຂວງ ຫລວງພຣະບາງ, ມັນໄດ້ ພິສູດໃຫ້ເຫັນແລ້ວວ່າ "ພັກຣັດ ບໍ່ໄດ້ເອົາໃຈໃສ່ປາບປາມ ເທົ້າທີ່ຄວນ".... ຕຣົງກັນຂ້າມ, ພັກຣັດໄດ້ສວຍໃຊ້ ສິ່ງຕ່າງໆເຫລົ່ານີ້ ເປັນເງື່ອນໄຂ ຂໍການຊ່ວຍເຫລືອລ້າ ຈາກອົງການ

ຈັດຕັ້ງສາກົນ, ໂດຍອ້າງວ່າ "ຂາດງົບປະມານ ແລະຂາດພະນັກງານເຮັດວຽກ". ເຖິງຈະໄດ້ຮັບການຊ່ວຍເຫຼືອມາຫລາຍປານໃດກໍຕາມ... ແຕ່ໃນພາກປະຕິບັດວຽກງານຕົວຈິງແລ້ວ, ກໍບໍ່ມີຫຍັງດີຂຶ້ນ.

ການຜລິດແລະຈຳໜ່າຍຢາບ້າ, ເຮໂຣອີນປະເພດຕ່າງໆ ຢ່າງກວ້າງຂວາງແລະສດວກສບາຍ ມີຢູ່ໃນລາວປະຈຸບັດນີ້, ນອກຈາກຈະເຮັດໃຫ້ກຽດສັກສີຂອງຊາດເສື່ອມເສັຽແລ້ວ, ຍັງເປັນການເບື່ອເມົາຄົນໃນຊາດຕົນເອງ ໃຫ້ກາຍເປັນຄົນພິການທາງມັນສມອງ ແລະຮ່າງກາຍອີກດ້ວຍ, ໂດຍສະເພາະເຍົາວະຊົນຂອງຊາດ ທີ່ເປັນກຳລັງແຮງໃນການພັທນາປະເທດ. ແນ່ນອນວ່າ, ຖ້າພັກຣັດຍັງສືບຕໍ່ສນັບສນູນຢູ່ເບື້ອງຫລັງການຄ້າຢາເສບຕິດອີກຕໍ່ໄປ...ປະເທດລາວ ກໍຈະເຕັມໄປດ້ວຍ "**ຄົນພິການສ້າງຊາດ**" ຢ່າງບໍ່ຕ້ອງສົງໃສ!.- ພັກຣັດຈະສ້າງຊາດ ໃຫ້ຈເຣີນສີວິໄລ ໄດ້ຢ່າງໃດ?

ນອກຈາກການເບື່ອເມົາຄົນໃນຊາດແລ້ວ, ຍັງທຳລາຍກຽດສັກສີຂອງຊາດຕື່ມອີກ. ພັກຣັດຖືກທະນາຍຄວາມ ຂອງນາງ Samantha Orobator ຜູ້ຍິງອັງກິດ ໃນຄະດີຢາເສບຕິດ ກ່າວທ້າທາຍ ວ່າ **"ການດຳເນີນຄະດີໃນລາວ ເປັນສາກລະຄອນ ເພື່ອຫລອກລວງເທົ່ານັ້ນເອງ". ການທ້າທາຍອັນນີ້, ມັນໄດ້ເຍືອງໃຫ້ເຫັນໃບໜ້າ ຂອງສານຍຸຕິທັມລາວ..ຊຶ່ງບໍ່ໄດ້ຕັດສີນບັນຫາດ້ວຍຄວາມຍຸຕິທັມເລີຍ.** ນາງໄດ້ຖືກບັງຄັບ ໃຫ້ເຊັນເອກສານຫລາຍຢ່າງ, ບໍ່ໄດ້ຮັບການຊ່ວຍເຫລືອຈາກທະນາຍຄວາມອິສຣະ, ຖືກກັ່ນແກ້ງເອົາປຽບ ຈາກຣັຖບານທີ່ມີຄວາມຕັ້ງໃຈຈະໃສ່ໂທດນາງ.- ຄວາມບໍ່ຍຸຕິທັມອັນນີ້, ໄດ້ຂາຍໜ້າພັກຣັດຜເດັດການ ໄປທົ່ວໂລກ.

ພວກເຮົາ, ຮຽກຮ້ອງມາຍັງ ອົງການປາບປາມຢາເສບຕິດ ແລະ ອາສຍາກັມ ຂອງ ສະຫະປະຊາຊາດ (UNODC) ແລະອົງການຈັດຕັ້ງສາກົນອື່ນໆ ຈົ່ງໄດ້ບີບຣັດໃຫ້ພັກຣັດຢຸດຕິການຜລິດ, ການຈຳໜ່າຍ ແລະການສົ່ງຊ່ຽນຢາເສບຕິດ ທີ່ຜິດກົດໝາຍ ແລະນຳເອົາຜູ້ກະທຳຜິດ ມາລົງໂທດ, ເພາະ ມັນຈະຊ່ວຍໃຫ້ການພັທນາເສຖກິດ-ສັງຄົມ ດີຂຶ້ນ ແລະອາສຍາກັມ ການຄ້າມະນຸດ ກໍຈະລົດນ້ອຍຖອຍລົງ,

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໗ ກັນຍາ ໒໐໐໙.**